ເລື່ອງ ໂດຍ ອຸທິນ ບຸນຍາວົງ

ແຕ້ມ ໂດຍ ຊິກໂກ້ ມິລາກົງ



# ມວນດອມ

# ບອນດຮປ

Action with Lao Children

ເລື່ອງໂດຍ ອຸທິນ ບຸນຍາວົງ

ແຕ້ມໂດຍ ຊິກໂກ້ ມິລາກົງ

ຫລາຍຄົນມັກຖາມເຮົາວ່າ:

- ເຈົ້າຊື່ວ່າຈັ່ງໃດ ?
- ອາຍຸຈັກປີ ?

ເຮົາຕອບວ່າ:

- ຊື່ ນວນດອມ, ອາຍຸ ຫົກປີ.



ຄອບຄົວເຮົາມີ : ພໍ່ຕູ້ ແມ່ຕູ້ ພໍ່ ແມ່ ເຮົາເອງ
ແລະນ້ອງສອງຄົນ.
ນ້ອງຜູ້ຖັດເຮົາ ເປັນຜູ້ຊາຍ
ອາຍຸ ສີ່ປີ. ຄົນສຸດທ້າຍເປັນແມ່ຍິງ
ອາຍຸໄດ້ຂວບປາຍ.



ແມ່ເວົ້າວ່າ ເຮົາຍັງຈະມີນ້ອງເກີດມາຕື່ມອີກ.
ແມ່ດີໃຈທີ່ເຮົາ ເປັນລູກສາວກົກ.



ພໍ່ເປັນພະນັກງານ ຢູ່ບໍລິສັດ ກໍ່ສ້າງ

24/VII
ຫ້າມຈຳໜ່າຍ



ແມ່ຢູ່ບ້ານລ້ຽງດູລູກ ທັງລ້ຽງເປັດ ລ້ຽງໄກ່ ແລະໝູ.
ແມ່ປູກຜັກ ຫລາຍຢ່າງ ມີຜັກກາດ ກະລຳປີ ຜັກບົ່ວ ຜັກຫອມ
ຜັກຊີ ຫອມປ້ອມ ແລະອື່ນໆ.



ເຮົາເຮັດວຽກຊ່ອຍແມ່ ເຊັ່ນ ເກືອໝູ ເກືອເປັດ ເກືອໄກ່



ເຮົາມັກເບິ່ງໝູນ້ອຍ ກິນນົມແມ່ຂອງມັນ.



ໝູນ້ອຍພວມຂີ້ດື້ ມັນຍາດກັນດູດນົມ ບາງໂຕໄຕ່ຂຶ້ນຢອງແມ່
ຂະນະທີ່ແມ່ມັນນອນຕະແຄງ.
ບາງເທື່ອ ໝູນ້ອຍອອກຈາກຄອກ ໄປເລາະຫລິ້ນຕາມເດີ່ນບ້ານ.
ເຮົາ ແລະນ້ອງ ພາກັນໄລ່ມັນ ກັບຄືນເມືອຄອກ.
ຍາມໃດໄລ່ໝູນ້ອຍ ພວກເຮົາ ທັງເມື່ອຍ ທັງມ່ວນ



ແລ້ວກໍພາກັນຫົວແອ້ກໆ.
ຄອບຄົວເຮົາມີຄວາມສະຫງົບສຸກດີ,



ແຕ່ມີບາງເທື່ອ ພໍ່ກິນເຫລົ້າເມົາມາ
ແລ້ວກໍເວົ້າຮ້າຍໆໃສ່ແມ່ ໃສ່ເຮົາ ແລະນ້ອງໆ.
ເຮົາຢ້ານພໍ່ ຕອນພໍ່ເມົາເຫລົ້າ

24/VII
ຫ້າມຈຳໜ່າຍ



ພໍ່ເຮັດກະຟຶດກະຟັດ ທັງເວົ້າສຽງດັງໆ.
ປົກກະຕິ ພໍ່ຊື້ເຫລົ້າມາໄວ້ເຮືອນ
ແລະເຫຍັ້ນກິນມື້ລະຈອກ ສອງຈອກ.
ກິນເຫລົ້າຢູ່ເຮືອນ ພໍ່ບໍ່ເມົາເລີຍ.



ບາງເທື່ອ ພໍ່ໄປຊື້ເຫລົ້າກິນຢູ່ຮ້ານແຄມທາງ.
ຢູ່ທີ່ນັ້ນ ພໍ່ພົບໝູ່ເພື່ອນ ແລ້ວກໍນັ່ງກິນເຫລົ້າດົນໆ.

ຍາມໃດ ພໍ່ນັ່ງກິນເຫລົ້ານຳໝູ່ ໂດຍສະເພາະລຸງປ້ອງ
ພໍ່ເມົາເຫລົ້າສະເໝີ.



ເມື່ອພໍ່ເມົາເຫລົ້າ ພວກເຮົາ
ຫລົບລີ້ ບໍ່ຢາກໃຫ້ພໍ່ເຫັນ
ເພາະຢ້ານເພິ່ນຮ້າຍດ່າ.





ຍາມໃດລຸງປ້ອງ ມາຫາພໍ່ຢູ່ເຮືອນ ແມ່ມັກຈົ່ມວ່າ:

- ມາຊວນກັນໄປກິນເຫລົ້າອີກແລ້ວ ເມົາຕາມເຄີຍອີກແຫລະ !

ເຮົາເຫັນວ່າ ຄອບຄົວເຮົາ ມີເລື່ອງ
ບໍ່ສະບາຍໃຈ ກໍແມ່ນຍາມພໍ່ເມົາເຫລົ້າ.
ລຸງປ້ອງ ມັກຊວນພໍ່ໄປກິນເຫລົ້າ ແລ້ວເມົາກັບມາ.

ມື້ໜຶ່ງ ເຮົາເວົ້າກັບລຸງປ້ອງ.
- ລຸງປ້ອງ ຢ່າພາພໍ່ໄປກິນເຫລົ້າຫລາຍເດີ !
ພໍ່ກິນເຫລົ້າເມົາແລ້ວ ມາຮ້າຍແຕ່ຫລານ
ຈົນຫລານຢາກໜີໄປໄກໆ.
ຕອນພໍ່ບໍ່ເມົາ ພໍ່ຮັກຫລານຫລາຍໆ.



ພໍ່ກັບລຸງປ້ອງ ເຮັດການຢູ່ບ່ອນດຽວກັນ.
ມື້ນີ້ ທັງສອງຄົນເພິ່ນ ອອກຈາກເຮືອນ ໄປນຳກັນອີກ.



ຕອນກັບມາ ພໍ່ບໍ່ເມົາເຫລົ້າເລີຍ ຂ້ອຍໂດດກອດພໍ່
ດ້ວຍຄວາມດີໃຈ.

ລຸງປ້ອງບໍ່ມາເຮືອນເຮົາ ເປັນເວລາດົນ.
ສອງເດືອນຜ່ານໄປ ຈຶ່ງເຫັນລຸງປ້ອງມາຊວນພໍ່ໄປ.





ແຕ່ບັດນີ້ ພໍ່ກັບມາເຮືອນ ໂດຍບໍ່ເມົາເຫລົ້າຄືດັ່ງແຕ່ກ່ອນ
ເຮົາຮັກພໍ່ຫລາຍຂຶ້ນ ຫລາຍຂຶ້ນທຸກມື້.

**Story Summary for "Nouandorm"**
**written by Outhin Bounynavong, translated by Inkien Dejvongsa**

"Nouandorm" is a story of a six year old girl who tells about her happy family life where she lives with her two siblings, her own parents and her grandparents. Her father works at a construction company and her mother stays home to look after the children and raises domestic animals and tends her kitchen garden.

Nouandorm's father likes to drink alcohol with his friends and there is one particular friend that her father goes out to drink with regularly and they get drunk every time. Nouandorm tells that when her father drinks alone at home he only drinks a little bit and so doesn't get drunk, but observes that when he drinks with this friend he gets drunk and becomes very unpleasant, he shouts and speaks harshly and frightfully to his children and family.

The family is unhappy and Nouandorm herself is afraid of her father when he is drunk, she wants to be far away from him. One day she decides to tell her father's friend to stop taking her father out to drink. She explains how this saddens and frightens her family when her father is drunk. Nouandorm says that when her father is not drunk he shows that he loves everyone very much.

The young girl was able to speak to an adult, and the adult listened to the child, in the end her father and his friend stop their drinking habit and the family returns to happiness.

ເລື່ອງ ໂດຍ ອຸທິນ ບຸນຍາວົງ, ແຕ້ມ ໂດຍ ຊົກໂກ້ ມີລາກົງ
ຈັດໜ້າອອກແບບປົກ: ບໍລິສັດ ດອກເກດການພິມ ຈຳກັດຜູ້ດຽວ ໂທ: (21) 2637468
ບັນນາທິການ ແລະ ຈັດພິມ ໂດຍ:
ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ໂທ: (21) 213449
ອຸປະຖຳ ໂດຍ ອົງການຮ່ວມມືສາກົນ ປະເທດຍີ່ປຸ່ນ ໄຈ່ກ່າ (JICA)
ຈຳນວນພິມ ALC 2000 ຫົວ ແລະ JICA 3000 ຫົວ,
© ສະຫງວນລິຂະສິດ ເລື່ອງ ໂດຍ ບໍລິສັດ ດອກເກດ ການພິມຈຳກັດ, ຮູບປະກອບ ໂດຍ ຊົກໂກ້ ມີລາກົງ
ພິມຄັ້ງທີ 1, ພະຈິກ 2006, ຈຳນວນ 5000 ຫົວ, ລທບ 014 ພຈ 231020076, ພິມທີ່ ປານຄຳ ໄຣເທັກ.

ຈັດພິມໂດຍ

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ອຸປະຖຳໂດຍ

ອົງການຮ່ວມມືສາກົນຂອງປະເທດຍີ່ປຸ່ນ ໄຈ່ກ່າ
Japan International Cooperation Agency